Ottawa County Health Department

# ຄວາມຈິງຕໍ່ມວນຊົນ

## ໂຣກເປ້ຍ [POLIO]

### ໂຣກເປ້ຍຄືຫຍັງ?

ໂຣກເປ້ຍເກີດຈາກວາຍຣັສຊຶ່ງສາມາດເຮັດໃຫ້ເປັນອຳມະພາດຊົ່ວຄາວ ຫລື ຕະຫລອດໄປ ຫລື ຕາຍໄດ້.

### ໂຣກເປ້ຍແຜ່ລາມແນວໃດ?

- ຕິດຕໍ່ຄົນຫາຄົນໂດຍການເອົາສິ່ງໃດສິ່ງໜຶ່ງທີ່ມີອາຈົມຂອງຄົນທີ່ເປັນໂຣກເປ້ຍເຂົ້າປາກ.
- ຕິດຕໍ່ຄົນຫາຄົນໂດຍຂີ້ມູກຈາກດັງ ຫລື ປາກຂອງຄົນທີ່ເປັນໂຣກເປ້ຍ.

### ອາການບາງຢ່າງມີຫຍັງແດ່?

- ຄີງຮ້ອນ
- ປວດຫົວ
- ປັ້ນທ້ອງປວດຮາກ
- ຮາກ
- ເຈັບປວດກ້າມເນື້ອຢ່າງໜັກ
- ຫລັງ ແລະ ຄໍແຂງກະດ້າງ

### ຈະກວດໂຣກເປ້ຍໄດ້ແນວໃດ?

ໂດຍການກວດພິເສດເບິ່ງຮູຄໍ, ອາຈົມ ຫລື ນ້ຳແຫລວຈາກສັນຫລັງ.

### ຈະຮັກສາໂຣກເປ້ຍໄດ້ແນວໃດ?

ປະຈຸບັນນີ້ບໍ່ມີວິທີຮັກສາທີ່ຈະເຮັດໃຫ້ໂຣກນີ້ເຊົາໄດ້. ເປົ້າໝາຍຂອງການຮັກສາແມ່ນບໍ່ເຮັດໃຫ້ເຈັບ ຫລື ກະວົນກະວາຍຫລາຍເທົ່ານັ້ນ.

### ຈະປ້ອງກັນຈາກໂຣກເປ້ຍດ້ວຍວິທີໃດ?

ການສັກຢາປ້ອງກັນໂຣກນີ້ເປັນພື້ນດີສຳລັບຄົນສ່ວນຫລາຍ.

**ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ໂຣກເປ້ຍ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/000680.htm

12251 James St., Suite 400
Holland, MI 49424
ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643
ແວບໄຊ: www.miOttawa.org